**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

# ເຕັກນິກ

# ການເຮັດກະເສດສຸມປູກເຂົ້ານາແຊງ



ເອກະສານ ປະກອບການຝຶກອົບຮົມ 24:

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະ ປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະ ພະນັກງານສົ່ງເສີມຂັ້ນ ບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂື້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະ ປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU) ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



22. ເຕັກນິກການປຸງແຕ່ງອາຫານຈາກສັດນ້ຳ
23. ຂໍ້ແນະນຳວິທີການລ້ຽງໄກ່ພື້ນບ້ານທີ່ໄດ້ຮັບຜົນດີ
24. ເຕັກນິກການປູກເຂົ້າແບບກະເສດສຸມ
25. ເຕັກນິກການນຳໃຊ້ EM
26. ເຕັກນິກການປຸງແຕ່ງອາຫານຈາກກ້ວຍ
27. ເຕັກນິກການຂະຫຍາຍພັນໄມ້ໃຫ້ໝາກ
28. ເຕັກນິກການເຮັດຝຸ່ນບົ່ມເພື່ອປັບປຸງດິນ
29. ເຕັກນິກການປູກຫວານຫາງແຂ້
30. ເຕັກນິກການປູກໝາກມັງກອນ
31. ເຕັກນິກການປູກສາລີ

**ແຜ່ນພັບ**

1. ເຕັກນິກການລ້ຽງໝູ
2. ພະຍາດກາຝາກຂອງໝູ
3. ເຕັກນິກການຕັດແຂ້ວໝູ
4. ການອະນຸບານໝູນ້ອຍເກີດໃໝ່
5. ເຕັກນິກການລ້ຽງໄກ່ພື້ນບ້ານ
6. ການປ້ອງກັນພະຍາດນິວຄາເຊີນໄກ່
7. ເຕັກນິກການຕົກກ້ານາແຊງ
8. ເຕັກນິກການເຮັດຝຸ່ນບົ່ມ ແລະການນຳໃຊ້ໃນນາເຂົ້າ
9. ເຕັກນິກການຕົກກ້າດາປ໋ອກ
10. ເຕັກນິກການເຮັດນາຫວ່ານດິນຕົມ
11. ເຕັກນິກການໃຫ້ນ້ຳແກ່ເຂົ້າ
12. ຄວາມຕ້ອງການນ້ຳຂອງພືດ (ເຂດພາກໃຕ້, ກາງ ແລະເໜືອ)
13. ການລະບາດຂອງພະຍາດສັດຄ້ຽວເອື້ອງ

# ປື້ມຄູ່ມືໃນແຕ່ລະເລື້ອງ

1. ເຕັກນິກການປູກໝາກເຜັດໃຫຍ່
2. ເຕັກນິກການປູກຜັກບູອກໂຄລີ
3. ເຕັກນິກການປູກຜັກກະລໍ່າປີ
4. ເຕັກນິກການປູກຜັກກະລໍ່າດອກ
5. ເຕັກນິກການປູກຜັກກາດຂາວ
6. ເຕັກນິກການປູກຜັກກາດນາ
7. ເຕັກນິກການປູກຜັກກາດຫົວ
8. ເຕັກນິກການປູກໝາກຖົ່ວ
9. ເຕັກນິກການປູກຜັກຫອມປ້ອມ
10. ເຕັກນິກການປູກໝາກແຕງກວາ
11. ເຕັກນິກການປູກຜັກທຽມ
12. ເຕັກນິກການປູກໝາກເຜັດຍອກ
13. ເຕັກນິກການປູກຜັກກາດຂຽວກວາງຕຸ້ງ
14. ເຕັກນິກການປູກໝາກເຜັດຂີ້ໜູ
15. ເຕັກນິກການປູກຜັກສະຫຼັດ
16. ເຕັກນິກການປູກໝາກເຜັດຊີ້ຟ້າ
17. ເຕັກນິກການປູກຜັກບົ່ວແບ່ງ
18. ເຕັກນິກການປູກໝາກຖົ່ວຍັດ
19. ເຕັກນິກການປູກຜັກບົ່ວຫົວໃຫຍ່
20. ເຕັກນິກການປູກໝາກເລັ່ນ
21. ເຕັກນິກການປູກຖົ່ວຝັກຍາວ



# ເອກະສານ 24:
# ເຕັກນິກການເຮັດກະເສດສຸມ ປູກເຂົ້ານາແຊງ

## ສາລະບານ


ບົດນໍາ ........ 2
ເຕັກນິກການເຮັດກະເສດສຸມ ປູກເຂົ້ານາແຊງ ........ 3
ບັນຫານໍ້າ ........ 4
ການຕຽມດິນໝານກ້າ ........ 5
ບັນຫາແມວເຂົ້າ ........ 4
ການກໍານົດເວລາຕົກກ້າ, ອັດຕາປູດ ........ 8
ການຕຽມດິນເພື່ອປັກດໍາ ........ 13
ການຕົກກ້າ ........ 14
ການປັກດໍາ ........ 16
ການບົວລະບັດຮັກສາ ........ 16
ການເກັບກ່ຽວ ........ 18
ຂໍ້ຄວນເອົາໃຈໃສ່ ........ 18

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້

ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

# ເຕັກນິກການເຮັດກະເສດສຸມປູກເຂົ້ານາແຊງ

## ບົດນຳ

ເຕັກນິກການເຮັດກະເສດສຸມປູກເຂົ້າ ແລະພືດອື່ນໆແມ່ນວິທະຍາການຂອງຍຸກສະໄໝແຫ່ງໂລກາພິວັດ, ເພາະວ່າໃນຍຸກນີ້ປະເທດໃດໆໃນໂລກກໍເວົ້າເຖິງການຍົກສະມັດຕະພາບ, ຍົກຜະລິດຕະພາບການ ຜະລິດໃຫ້ສູງຂຶ້ນ, ພ້ອມດຽວກັນກໍຍັງໄດ້ເວົ້າເຖິງບັນຫາຄຸນນະພາບຂອງການຜະລິດອີກດ້ວຍ ເພື່ອຜະລິດເປັນສິນຄ້າ.

ຢ່າງໃດກໍດີເຖິງແມ່ນບັນຫາກະເສດສຸມ ຈະເຄີຍໄດ້ຖືກຍົກມາເຜີຍແຜ່ແນະນຳໃຫ້ພະນັກງານກະສິກຳ ກໍຄືຊາວກະສິກອນ ໃນຫຼາຍປີຜ່ານມາ, ແຕ່ໃນພາກປະຕິບັດຕົວຈິງຍັງເຮັດໄດ້ບໍ່ທັນກ້ວາງຂວາງເທົ່າທີ່ຄວນ ໂດຍທົ່ວໄປຊາວກະສິກອນບາງເຂດໄດ້ເຮັດກະເສດສຸມ ແຕ່ກໍຍັງປະຕິບັດໄດ້ບໍ່ຄົບຊຸດ. ດັ່ງນັ້ນ ເພື່ອໃຫ້ການຜັນຂະຫຍາຍເນື້ອໃນຂອງມະຕິກອງປະຊຸມໃຫຍ່ຄັ້ງທີ *VII* ຂອງພັກ ໃຫ້ປະກົດຜົນເປັນຈິງ ເພື່ອກ້າວໄປສູ່ການຫັນເປັນທັນສະໄໝນັ້ນ, ໃນເທື່ອນີ້ພວກເຮົາຈຶ່ງຍົກເອົາບັນຫາ ເຕັກນິກກະເສດສຸມປູກເຂົ້ານາແຊງ ມາຟື້ນຟັນຄືນໃໝ່ອີກ, ເພື່ອປັບປຸງເຕັກນິກການຜະລິດຂອງພະນັກງານ ການສົ່ງເສີມ ໃຫ້ສູງຂຶ້ນ ແລະນຳເອົາບົດຮຽນໄປແນະນຳປະຊາຊົນເຮັດການຜະລິດ ແບບກະເສດສຸມ ໃຫ້ກວ້າງຂວາງ.

ບົດວິຊາການດັ່ງກ່າວແມ່ນໄດ້ລຽບລຽງຈາກເອກະສານຫຼາຍຫົວ , ເຖິງຢ່າງໃດກໍດີຄິດວ່າຍັງບໍ່ທັນຄົບຖ້ວນເທື່ອ, ແຕ່ຖ້າຜູ້ອ່ານຫາກໄດ້ນຳ

ເອົາຂອດເຕັກນິກທີ່ໄດ້ແນະນຳມານີ້ໄປປະຕິບັດເຂົ້າໃນວຽກງານຕົວຈິງ ເຊື່ອແນ່ວ່າບໍ່ຫຼາຍກໍໜ້ອຍຄົງຈະເພີ່ມຜະລິດຕະພາບການຜະລິດສູງຂຶ້ນກວ່າເກົ່າ.

ພວກເຮົານັກວິຊາການທີ່ສັງລວມປຶ້ມຫົວນີ້ ຍິນດີຮັບເອົາຄຳຕຳນິຕິຊົມ ແລະຊີ້ແນະຈາກທ່ານຜູ້ຮູ້ ເພື່ອປັບປຸງເຕັກນິກກະເສດສຸມໃຫ້ມີການພັດທະນາໄປຢ່າງບໍ່ຢຸດຢັ້ງ.

# 1. ເຕັກນິກການເຮັດກະເສດສຸມປູກເຂົ້ານາແຊງ

ການເຮັດນາແຊງ ບໍ່ແມ່ນການເຮັດນາແບບທຳມະດາ, ຖ້າບໍ່ເຮັດແບບກະເສດສຸມດ້ວຍ ການນຳໃຊ້ເຕັກນິກວິທະຍາການແລ້ວ ຜົນຜະລິດທີ່ໄດ້ຮັບນັ້ນຈະມີຄວາມສ່ຽງບໍ່ກຸ້ມຄ່າກັບການລົງທຶນ.

ສະນັ້ນ, ເພື່ອຮັບປະກັນຜົນຜະລິດ, ຖ້າທ້ອງຖິ່ນໃດມີແຜນການໆຊຸກຍູ້ການປູກເຂົ້ານາແຊງ ນັ້ນເຫັນວ່າມີຄວາມຈຳເປັນຕ້ອງໄດ້ປະຕິບັດຕາມເຕັກນິກວິທະຍາການ ທີ່ຈຳເປັນບາງດ້ານ ດັ່ງຕໍ່ໄປນີ້ :

ການຕັດສິນໃຈເຮັດນາແຊງຢູ່ໃນແຕ່ລະທ້ອງຖິ່ນ, ກ່ອນອື່ນໝົດນັກວິຊາການ (ພະນັກງານສົ່ງເສີມ) ຕ້ອງໄດ້ສຶກສາກ່ຽວກັບຄວາມອາດສາມາດ ແລະສະພາບແວດລ້ອມທີ່ອຳນວຍ ເປັນຕົ້ນລະບົບຊົນລະປະທານຮັບປະກັນພຽງໃດ , ປະເພດດິນເໝາະສົມຫຼືບໍ່ ? ສຶກສາກ່ຽວກັບລະດູການ , ແຮງງານ... ໝົດນຮ້ເປັນປັດໃຈສຳຄັນ ເພື່ອຕັດສິນໃຈແລ້ວສ້າງເປັນແຜນການລະອຽດຄວາມຕ້ອງການປັດໃຈຂາເຂົ້າກະສິກຳ. ສິ່ງໜຶ່ງທີ່ນັກສົ່ງ

ເສຍຫາຍ.

- ກ່ອນຈະເກັບກ່ຽວໃຫ້ສັງເກດເບິ່ງເມັດເຂົ້າຖ້າຫາກເຫັນວ່າໃນແຕ່ລະຮວງມີສີເຫຼືອງເຖິງ 50 _ 60 % ແລ້ວໃຫ້ເປົ່ງນ້ຳອອກປະໄວ້ປະມານ 7 _ 10 ມື້ ຈຶ່ງຄ່ອຍລົງມືເກັບກ່ຽວ.



ຮູບ.13. ການເກັບກ່ຽວ



ເສີມ ຕ້ອງຄຳນຶງແມ່ນການຄິດໄລ່ ຫຼືໄລ່ລຽງເສດຖະກິດຈະກຸ້ມທຶນ ຫຼືໄດ້ກຳໄລຫຼືບໍ່? ຖ້າບໍ່ເໝາະສົມເຮັດນາແຊງ ກໍ່ຕ້ອງຄິດໃສ່ພືດອື່ນທີ່ມີເສດຖະກິດກ່ອນ.

## 1.1. ບັນຫານ້ຳ

ກ່ອນຈະລົງມືເຮັດກະເສດສຸມປູກເຂົ້ານາແຊງ ນັ້ນໃຫ້ພະນັກງານວິຊາສະເພາະກວດກາເບິ່ງລະບົບຊົນລະປະທານຄັກແນ່ເສຽກ່ອນ, ບ່ອນໃດເປ່ເພ, ຮົ່ວຊຶມກໍໃຫ້ນຳພາສ້ອມແປງຄືນ ແລະພ້ອມທັງຄິດໄລ່ເບິ່ງຄວາມອາດສາມາດຂອງບໍລິມາດການສະໜອງນ້ຳ ເພື່ອເຮັດນາແຊງໄດ້ຈັກເຮັກຕາ ຈາກນັ້ນຈິ່ງຕົກລົງເຮັດໃນຈຳນວນທີ່ນ້ຳຮັບປະກັນ, ສິ່ງສຳຄັນອັນໜຶ່ງຕ້ອງໄດ້ປຸກລະດົມໃຫ້ຊາວນາປ້ານເສີມຄັນນາໃຫ້ໃຫຍ່ສູງ ເພື່ອຮັບປະກັນການກັກຂັງນ້ຳ ໃຫ້ຢູ່ໃນລະດັບອັນແນ່ນອນ. ແຕ່ສິ່ງທີ່ບໍ່ຄວນເບິ່ງຂ້າມແມ່ນຕ້ອງໄດ້ ສ້າງຂະບວນການປຸກລະດົມປະຊາຊົນຊາວກະສິກອນໃນທ້ອງຖິ່ນໄດ້ເອົາໃຈໃສ່ອານາໄມຄອງເໜືອງ ໃຫ້ສະດວກໃນການຄຸ້ມຄອງນ້ຳຊົນລະປະທານ ໄດ້ຖືກນຳໃຊ້ຢ່າງຖົ່ວເຖິງ.

- ບັນຫາຄອງຊອຍນ້ອຍຂັ້ນ 4 _ 5 (ຄອງໄສ້ໄກ່) ກໍມີຄວາມສຳຄັນ, ເພື່ອສະດວກໃນການລະບາຍນ້ຳ ຫຼືແບ່ງປັນນ້ຳເຂົ້ານາແຕ່ລະໄຮ່. ຄວນເອົາໃຈໃສ່ປັບປຸງໃຫ້ມັນສາມາດນຳໃຊ້ໄດ້ ຫຼືຖ້າບໍ່ມີກໍຄວນຊີ້ນຳເຂົາເຈົ້າໄດ້ເຮັດຄອງໄສ້ໄກ່ເທື່ອລະໜ້ອຍໄປ. ເຮັດໄດ້ແນວນີ້ຈະເຮັດໃຫ້ ປະໂຫຍກນ້ຳ ແລະຝຸ່ນບໍ່ໄຫຼໜີ.



ຮູບ.1. ບັນຫານ້ຳໃນການຜະລິດ

## 1.2. ການຕຽມດິນໜານກ້າ

ດິນທີ່ຈະໃຊ້ເປັນບ່ອນເຮັດໜານກ້ານັ້ນ ຕ້ອງຄັດເລືອກເອົາດິນທີ່ຮາບພຽງດີ, ມີນ້ຳຮັບປະກັນ, ມີຮົ້ວໜາແໜ້ນປ້ອງກັນບໍ່ໃຫ້ສັດທຳລາຍ ແລະບໍ່ໃຫ້ຢູ່ໃກ້ຮົ່ມໄມ້. ຫຼັງຈາກຊອກບ່ອນໄດ້ແລ້ວໃຫ້ເອົາຝຸ່ນຄອກຫວ່ານໃສ່ໃນອັດຕາ 1_2 ກິໂລ / ຕາແມັດ, ໃຫ້ເປົ່ງນ້ຳເຂົ້າແລ້ວໄຖຮຸດປະໄວ້ ປະມານ 7 ຫາ 15 ວັນ ແລ້ວຈຶ່ງມາໄຖຄື້ນ ແລະຄາດໃຫ້ລະອຽດແຫຼກແຫຼວດີ. ຈາກນັ້ນຖ້າມີຝຸ່ນເຄມີສູດ 16_20_00 ແລະ 18_46_00 ກໍໃຫ້ຫວ່ານໃສ່ໃນອັດຕາ 20 ກຣາມ/ ຕາແມັດ (ໜຶ່ງກຳຕໍ່ແມັດມົນທົນ). ໃຫ້ຍົກເປັນໜານກວ້າງປະມານ 2 ແມັດ ແລະລວງຍາວສຸດແລ້ວແຕ່ຄວາມເໝາະສົມຂອງດິນ ແລະເນື້ອທີ່ຈະປັກດຳ. ໄລຍະໜານກ້າໃຫ້ຫ່າງກັນ 40 ຊັງຕີແມັດ ຫຼືສອກໜຶ່ງ, ເພື່ອໃຊ້ເປັນທາງຍ່າງໃນການບົວລະບັດຮັກສາ ແລະເປັນຮ່ອງລະບາຍນ້ຳເຂົ້າ_ອອກ , ສຳລັບຈະປັກດຳ 1 ເຮັກຕາ ຕ້ອງໃຊ້ໜານກ້າ 800_1,000 ຕາແມັດ. ກ່ອນຫວ່ານກ້າ ຖ້າມີຢາປ້ອງກັນພິດໄດອາຊີນອນໃຫ້ຫວ່ານໃນອັດຕາ 1 ກຣາມ ຕໍ່ຕາແມັດ.





### ງ. ການຮັກສາລະດັບນ້ຳ

ໃນລະດູນາແຊງ ເຖິງແມ່ນຈະມີຊົນລະປະທານຮັບປະກັນກໍຕາມ ການຊຸກຍູ້ຕ້ອງໄດ້ແນະນຳໃຫ້ຊາວນາໄດ້ເອົາໃຈໃສ່ຮັກສາລະດັບນ້ຳ ແລະບໍ່ຈຳເປັນຕ້ອງໃຫ້ລະດັບນ້ຳສູງເກີນ 10 ຊັງຕີແມັດ, ເພື່ອປະຢັດນ້ຳ, ການຄຸມນ້ຳໄດ້ດີໃນໄຮ່ນາ ກໍຈະເປັນວິທີໜຶ່ງ ເພື່ອບໍ່ໃຫ້ຫຍ້າເກີດ.

### ຈ. ການຕິດຕາມ ແລະກວດກາສັດຕູພືດ

ໃຫ້ລົງຕິດຕາມ ແລະກວດກາສະພາບສັດຕູພືດຢູ່ທົ່ງນາເປັນປະຈຳ , ຖ້າສັງເກດເຫັນອາການຜິດປົກກະຕິແລ້ວແມ່ນໃຫ້ລາຍງານຕໍ່ພະນັກງານວິຊາການປະຈຳເຂດຂອງ ທ່ານ ເພື່ອຈະໄດ້ແກ້ໄຂທັນເວລາເພາະການຕັດສິນຜົນຜະລິດຕົວຈິງຈະໄດ້ໜ້ອຍ ຫຼືຫຼາຍແມ່ນຊ່ວງໄລຍະນີ້ເອງ.

## 1.12. ການເກັບກ່ຽວ

ການເກັບກ່ຽວເຂົ້ານາແຊງສ່ວນຫຼາຍ ແມ່ນຕົ້ນລະດູຝົນ, ສະນັ້ນການຈັດຕັ້ງການເກັບກ່ຽວ, ການມັດ, ການຂົນ, ການຟາດ, ການຕາກແມ່ນເປັນບັນຫາສຳຄັນທີ່ຕັດສິນສະມັດຕະພາບ ແລະຄຸນນະພາບຂອງຜົນຜະລິດ.

## 2. ຂໍ້ຄວນເອົາໃຈໃສ່

- ການຫ້າງຫາກະກຽມແຮງງານ ແລະເຄື່ອງມືຮັບໃຊ້ການເກັບກ່ຽວ.
- ເວລາກ່ຽວເຂົ້າແລ້ວໃຫ້ຟາດກັບທີ່ ຫຼືໃຫ້ຂົນຂະໜໄປໄວ້ຢູ່ລານ, ບໍ່ໃຫ້ປະປ່ອຍເຂົ້າແຮມຄືນຢູ່ທົ່ງນາເພາະຖ້າຝົນຕົກຈະເຮັດໃຫ້ຜົນຜະລິດ

### ຂ. ກຳນົດເວລາໃສ່ຝຸ່ນ

- ສຳລັບຝຸ່ນຄອກ, ຝຸ່ນຂຽວ, ຝຸ່ນບົ່ມມັ້ນ ໃຫ້ໃສ່ຮອງພວມກ່ອນໄຖຫຼືກ່ອນຄາດ.
- ສຳລັບຝຸ່ນເຄມີ: ສູດ16_20_00 ຫຼື 18_46_00 ໃຫ້ໃສ່ຮອງພື້ນກ່ອນຄາດເທື່ອສຸດທ້າຍກ່ອນປັກດຳ ອັດຕາ 100_150 ກິໂລ / ເຮັກຕາ .
- ສູດ 46_00_00 ໃຫ້ແບ່ງໃສ່ 2 ເທື່ອງລະ 50 ກິໂລ ຫຼັງຈາກປັກ ດຳ 20_25 ວັນ ແລະ40_45 ວັນ.

### ຄ. ການເສຍຫຍ້າ

- ຄວນເສຽຫຍ້າຢ່າງໜ້ອຍ 2 ຄັ້ງຕໍ່ລະດູ
- ຄັ້ງທີໜຶ່ງປະມານ 20_25 ວັນ ຫຼັງຈາກປັກດຳ
- ຄັ້ງທີສອງປະມານ 40_45 ວັນ ຫຼັງຈາກປັກດຳ
- ຫຍ້າຢູ່ຕາມຄອງເໜືອງ ຫຼືຕາມຄັນນາໃຫ້ໝັ່ນຖາງອອກ ເພື່ອບໍ່ໃຫ້ເປັນບ່ອນລີ້ຊ່ອນ ຂອງສັດຕູພືດຊະນິດຕ່າງໆ.




ຮູບ.12. ການເສຍຫຍ້າ



**ຂໍ້ສັງເກດ:** ຜ່ານມານັກສົ່ງເສີມ ຍັງບໍ່ທັນໄດ້ແນະນຳ ຫຼືນຳພາຊາວກະສິກອນ ເຮັດຕາກ້າຖືກຕາມເຕັກນິກຄື: ເຮັດເປັນໜານ ຫຼືແປງຕາມຂະໜາດທີ່ໄດ້ກ່າວມາຂ້າງເທິງ, ຊຶ່ງເປັນຂໍ້ດີທີ່ຕ້ອງໄດ້ພາກັນປຸກລະດົມຊາວກະສິກອນໄດ້ເຮັດເປັນແບບຢ່າງຕາມຈຸດໂຄງການຕ່າງໆໄປກ່ອນແລ້ວ ຈຶ່ງອະທິບາຍໃຫ້ເຂົາເຈົ້າໄດ້ເຂົ້າໃຈຮູ້ເຖິງເຫດຜົນແລ້ວໄດ້ເຮັດຢ່າງກາຍເປັນປະເພນີນິຍົມ.



ຮູບ.2. ການກຽມດິນໜານກ້າ

## 1.3. ບັນຫາແນວເຂົ້າປູກ

ແນວພັນສຳລັບປູກເຂົ້ານາແຊງໃນປັດຈຸບັນ ແມ່ນແນວພັນປັບປຸງທີ່ມີອາຍຸສັ້ນເຊັ່ນ: ເຂົ້າໜຽວທ່າດອກຄຳ 1, ທ່າດອກຄຳ 2, ທ່າດອກຄຳ 3, ທ່າດອກຄຳ 5, ໂພນງາມ 1, ໂພນງາມ 2, ນ້ຳຕານ 1 ແລະທ່າສະໂນ 1 ເຂົ້າຈ້າວ: ເຊແອ 203.... ແນວພັນເຫຼົ່ານີ້ລ້ວນແຕ່ໃຫ້ຜົນຜະລິດສູງ ແລະປູກໄດ້ທັງນາແຊງ_ນາປີ. ໃນເງື່ອນໄຂກະເສດສຸມທີ່ນຳໃຊ້ຝຸ່ນຄອກ, ຝຸ່ນບົ່ມນັ້ນ ບາງແນວພັນນັ້ນສາມາດໃຫ້ຜົນຜະລິດສູງກວ່າ 6 ໂຕນ / ເຮັກຕາ ດັ່ງເຂົ້າທ່າດອກຄຳ1, ທ່າດອກຄຳ5.

ສະນັ້ນ, ການນຳໃຊ້ເຕັກນິກກະເສດສຸມຈຶ່ງເປັນເຕັກນິກໜຶ່ງທີ່ສາມາດຍົກສູງສະມັດຕະພາບເຂົ້າໂດຍກົງໃນເນື້ອທີ່ຈຳກັດ, ນອກຈາກນັ້ນຍັງປັບປຸງດິນໃນໄລຍະຍາວອີກ.



ຮູບ.3. ບັນຫາແນວເຂົ້າປູກ





## 1.11. ການບົວລະບັດຮັກສາ

### ກ. ການໃສ່ຝຸ່ນ

ສຳລັບການປູກເຂົ້ານາແຊງແລ້ວ ແນວພັນເຂົ້າປັບປຸງຕ້ອງການແຮ່ທາດເພື່ອໃຊ້ເປັນອາຫານຫຼາຍກວ່າເຂົ້າພັນພື້ນເມືອງທຳມະດາ. ໃນເວລາດຽວກັນແຮ່ທາດທີ່ສະສົມຢູ່ໃນດິນກໍມີໜ້ອຍເພາະເຂົ້ານາປີໄດ້ນຳເອົາໄປໃຊ້ເປັນອາຫານໝົດແລ້ວ.

ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ຊອກຝຸ່ນມາໃສ່, ຝຸ່ນຊະນິດຕ່າງໆ ທີ່ເໝາະສົມສຳລັບການເຮັດນາແຊງນັ້ນແມ່ນຝຸ່ນຄອກ, ຝຸ່ນຂຽວ , ຝຸ່ນບົ່ມ, ຝຸ່ນເທົ່າ...ຝຸ່ນຊະນິດດັ່ງກ່າວແມ່ນເຮົາສາມາດຊອກໄດ້ຢູ່ຕາມທ້ອງຖິ່ນເຮົາເອງ. ຝຸ່ນຊະນິດນີ້ຈະຊ່ວຍປັບປຸງດິນນາໄດ້ດີທີ່ສຸດ. ສຳລັບເຂດທີ່ມີເນື້ອທີ່ນາເປັນດິນຊາຍແກມຕົມ ຄວນໃຊ້ຝຸ່ນຄອກໃຫ້ຫຼາຍ ຫຼືໃສ່ແກບກໍໄດ້, ແຕ່ຄວນປະສົມກັບຝຸ່ນເຄມີສູດ 15_15_15 ຈຶ່ງຈະໄດ້ຮັບຜົນດີ.



ຮູບ.11. ການໃສ່ຝຸ່ນ

## 1.10. ການປັກດຳ

ບັນຫາສຳຄັນໃນການປັກດຳ ແມ່ນໃຫ້ທັນກັບລະດູການດີແທ້ ຄວນປັກດຳໃນໄລຍະວັນທີ 10 ເດືອນ 12 ຫາ ວັນທີ 15/01. ກ່ອນຈະປັກດຳໃຫ້ຄຸມລະດັບນ້ຳຢູ່ໃນນາປະມານ2_5ຊຕມ, ການປັກດຳຄວນເຮັດເປັນແຖວຊື່ດ້ວຍການເນັ່ງເຊືອກ (ການເນັ່ງເຊືອກແມ່ນໃຫ້ເນັ່ງຈາກທິດຕາເວັນອອກຫາທິດຕາເວັນຕົກ) ຖ້າຫາກເຮັດໄດ້ແມ່ນເຮົາສາມາດເພີ່ມຜົນຜະລິດສູງຂຶ້ນຕື່ມຢ່າງໜ້ອຍ 15_20 %. ໄລຍະປັກດຳລະຫວ່າງສຸມຕໍ່ສຸມ: ບ່ອນດິນງາມ 15 x 20 ຊຕມ ແລະດິນທຳມະດາແມ່ນ 10 x 20 ຊຕມ, ການປັກດຳໃຫ້ດຳພໍດີບໍ່ເລິກ ແລະບໍ່ຕື້ນເກີນໄປ ແລະໃຫ້ໃສ່ ກີບກ້າປະມານ 2_3 ກີບກ້າ/ສຸມ , ໃນກໍລະນີກ້າຫາກແກ່ໃຫ້ໃສ່ 4_5 ກີບກ້າ/ສຸມ.

- ການປັກດຳຄວນຈິ່ງທາງເຂົ້າ ເພື່ອສະດວກໃນການບົວລະບັດຮັກສາ. ລວງກວ້າງຂອງທາງ 40 ຊຕມ (ປະມານໜຶ່ງສອກ) ແລະແຕ່ລະ 8_10 ແມັດໃດໃຫ້ຈິ່ງທາງໄວ້.




ຮູບ.10. ການປັກດຳ





## 1.4. ການກຳນົດເວລາຕົກກ້າ

ໂດຍທົ່ວໄປແລ້ວ ໃຫ້ເລີ່ມລົງມືຕົກກ້າແຕ່ວັນທີ 15 ພະຈິກ (11) ຫາວັນທີ 15 ທັນວາ (12) ແມ່ນເປັນເວລາທີ່ເໝາະສົມ. ການຕົກກ້າແມ່ນໃຫ້ຕົກເປັນງວດໆໄປໂດຍຄິດໄລແຮງງານທີ່ຈະປັກດຳຄັກແນ່ເສຍກ່ອນ ສະເລັ່ຍການປັກດຳນັ້ນວ່າຖ້າປັກດຳເປັນແຖວ ດ້ວຍການເນັ່ງເຊືອກແມ່ນຈະຕ້ອງໃຊ້ 50_60 ແຮງງານ/ມື້/ເຮັກຕາ ແລະຖ້າປັກດຳທຳມະດາຈະໃຊ້ 25_30 ແຮງງານ/ມື້/ເຮັກຕາ. ການຕົກກ້າໃຫ້ເອົາແນວເຂົ້າປູກທີ່ມີອາຍຸຍາວກ່ວາໝູ່ຕົກງວດທຳອິດກ່ອນ.

## 1.5. ອັດຕາແນວປູກ

ການເຮັດນາແຊງຈະຕ້ອງໄດ້ປັກດຳຖີ່ກວ່ານາປີ ເພາະວ່າມີແສງແດດຫຼາຍຕົ້ນເຂົ້າກໍຕໍ່າ ແລະລຳຕົ້ນແຂງແຮງ. ສະນັ້ນ ໃຫ້ໃສ່ແນວເຂົ້າປູກໃນອັດຕາ 80_100 ກິໂລ ສຳລັບຕົກກ້າປັກດຳ 1 ເຮັກຕາ.



ຮູບ.4. ອັດຕາແນວປູກ

## 1.6. ການແຊ່ແນວປູກ

ກ່ອນຈະນຳແນວເຂົ້າປູກໄປແຊ່ນັ້ນຕ້ອງຟັດ, ຮ່ອນເອົາເມັດລີບ ເມັດຫຍ້າ ແລະສິ່ງເຈືອປົນອື່ນໆອອກໃຫ້ໝົດ ໃຫ້ຄັດເລືອກເອົາແຕ່ເມັດເຕັມດີ, ໄປຕາກປະມານ 1_2 ແດດ, ຈາກນັ້ນໃຫ້ເອົາເຂົ້າປູກໃສ່ຟຸ່ຍ ຫຼືໄຫໄພ ທີ່ບັນຈຸນ້ຳ ແລະໃຫ້ຊາວເອົາເມັດທີ່ຟູຂຶ້ນໜ້ານ້ຳອອກໃຫ້ໝົດ (ວິທີການເອົາເມັດລີບ ຫຼືເຂົ້າໝາກກາງອອກໃຫ້ໝົດນັ້ນຈະ ຊ່ວຍຫຼຸດຜ່ອນການເກີດພະຍາດເຫງົ້າເໜົ່າໄດ້ ແລະຈະໄດ້ກ້າທີ່ມຸກດີ) ຈາກນັ້ນ, ອາດຈະເທໃສ່ກະຕ່າ ຫຼືໄຖ່ປ່ານກໍໄດ້ ແຕ່ບໍ່ໃຫ້ໃສ່ແໜ້ນແລ້ວແຊ່ລົງນ້ຳທີ່ສະອາດປະໄວ້ປະມານ 24 ຊົ່ວໂມງ ( ມື້ໜຶ່ງ ແລະຄືນໜຶ່ງ).

**ໝາຍເຫດ:** ຖ້າຫາກທ້ອງຖິ່ນໃດອາກາດໜາວຈັດນັ້ນ ໃຫ້ຕົ້ມນ້ຳໃຫ້ຟົດ ແລ້ວເອົານ້ຳເຢັນປະສົມໃນອັດຕາສ່ວນ 2 ຮ້ອນ 3 ເຢັນ ໃຫ້ນ້ຳພໍອຸ່ນເອົາມືຈຸ່ມລົງໄດ້ ແລ້ວຈຶ່ງເອົາກະຕ່າ ຫຼືກະບຸງແນວເຂົ້າປູກແຊ່ລົງເລີຍ ປະໄວ້ມື້ໜຶ່ງ ຄືນໜຶ່ງ ເພື່ອເລັ່ງໃຫ້ເມັດເຂົ້າງອກໄວ.



ຮູບ.5. ການແຊ່ແນວປູກ



ອັນໜຶ່ງກວາດໜ້າດິນໃຫ້ຮາບພຽງເສັຽກ່ອນ ແລ້ວຈຶ່ງລົງມືປັກດຳ. ເພື່ອບໍ່ໃຫ້ເປັນການຊັກຊ້າເວລານັ້ນດິນນາບ່ອນໃດທີ່ກ່ຽວເຂົ້ານາປີແລ້ວກໍໃຫ້ລົງມືຕຽມດິນໄຖຮຸດ, ຄາດລະອຽດແລ້ວຈຶ່ງເປັ່ງນຳເຂົ້າໃສ່ແຊ່ໄວ້ ເພື່ອເຮັດໃຫ້ດິນເປື່ອຍສະດວກໃນການຕຽມດິນເວລາປັກດຳ.

## 1.9. ການຫຼົກກ້າ

ເວລາອາຍຸກ້າໄດ້ 20 ວັນ ຫຼືປົ່ງໄດ້ 4_5 ໃບແລ້ວ ໃຫ້ກະກຽມເລີ່ມຫຼົກໂລດ. ເວລາຫຼົກກ້າໃຫ້ລ້າງຮາກກ້າໃຫ້ດີ, ການຫຼົກກ້າແມ່ນ ບໍ່ໃຫ້ຟາດແຮງ ຫຼືໃຊ້ຕີນເຕາະເພາະມັນຈະມີຜົນສະທ້ອນໃຫ້ແກ່ຕົ້ນກ້າ ເຮັດໃຫ້ຕົ້ນກ້າອ່ອນເພຽເວລານຳໄປປັກດຳເບື້ອງຕົ້ນ .



ຮູບ.9. ການຫຼົກກ້າປູກ



ຮູບ.8. ອາຍຸຂອງກ້າປູກ

## 1.8. ການກຽມດິນເພື່ອປັກດຳ

ການກຽມດິນເປັນບັນຫາທີ່ສຳຄັນ ເພື່ອປະຢັດແຮງງານໃນການຫຼົກຫຍ້າ ແລະຍົກສະມັດຕະພາບໃຫ້ສູງ. ໃຫ້ຂອກເອົາຝຸ່ນຄອກທີ່ມີຢູ່ທ້ອງຖິ່ນ ຫຼືແຫ່ງອື່ນມາໃສ່ເນື້ອທີ່ຈະເຮັດນາແຊງ, ນອກນັ້ນໃຫ້ລະດົມກັນ ຂອກຕັດເອົາຫຍ້າສີຂຽວປະເພດທີ່ເປື່ອຍງ່າຍມາຕັດໃຫ້ສັ້ນປະມານຄືບໜຶ່ງເທລົງພ້ອມກັບຝຸ່ນຄອກໄດ້ຫຼາຍເທົ່າໃດຍິ່ງເປັນການດີ (5_10 ໂຕນ / ເຮັກຕາ ) ສິ່ງທີ່ຄວນຫຼີກເວັ້ນນັ້ນແມ່ນບໍ່ໃຫ້ເອົາຫຍ້າສີຂຽວທີ່ມີແກ່ນແກ່ໄປໃສ່ທົ່ງນາ (ຫຍ້າອອກດອກແກ່) ເພາະຈະມີຄວາມລຳບາກໃນການບົວລະບັດຮັກສາເວລາຫຍ້າເກີດຂື້ນມາ.

ຈາກນັ້ນ, ໃຫ້ເປັ່ງນ້ຳເຂົ້າ, ລົງມືໄຖຣຸດແລ້ວແຊ່ນ້ຳປະໄວ້ 1_2 ອາທິດຈິ່ງໄຖຄົ້ນປະໄວ້ອີກ 1 ອາທິດ. ຈາກນັ້ນຈິ່ງຫວ່ານຝຸ່ນເຄມີຮອງພື້ນແລ້ວຈິ່ງລົງມືຄາດ ຫຼືປັ່ນໃຫ້ລະອຽດແລ້ວຂອກຫາໄມ້ຍາວ ຫຼືວັດຖຸອັນໃດ



## 1.7. ການບົ່ມແນວປູກ

ກ່ອນອື່ນຕ້ອງກະກຽມສະຖານທີບົ່ມເຊັ່ນ: ໃນບາງເຂດທີ່ມີອາກາດໜາວຄວນຂຸດຂຸມສຳລັບບົ່ມ ຂະໜາດຂອງຂຸມເລິກປະມານ 45_50 ຊຕມ, ລວງກວ້າງສຸດແລ້ວ ແຕ່ຈະພໍດີ, ເອົາເຟືອງຮອງພື້ນ ແລ້ວຈິ່ງເອົາເຂົ້າປູກທີ່ແຊ່ຊຶ່ງໄດ້ບັນຈຸໃສ່ໄຖແລ້ວນັ້ນລົງ ເອົາເຟືອງປົກເປັນຊັ້ນທຳອິດແລ້ວກໍເອົາແຜຢາງປົກເປັນຊັ້ນທີສອງ ຈາກນັ້ນ, ກໍເອົາເຟືອງ ປົກໃຫ້ໜາພໍສົມຄວນ ແລະເອົາໄມ້ ຫຼືວັດຖຸທີ່ໜັກເຕັງໄວ້ ມື້ຕໍ່ມາໃຫ້ເອົານ້ຳອຸ່ນພົມໄຖ່ແນວປູກແລ້ວປົກໄວ້ຄືນ.

ສຳລັບເຂດອົບອຸ່ນແມ່ນໃຫ້ເອົາເຂົ້າທີ່ແຊ່ນັ້ນຂື້ນມາ ແລ້ວເອົາໄຖ່ປ່ານຈຸ່ມນ້ຳໃຫ້ປຽກດີມາປົກຄຸມໃຫ້ຫຸ້ມໝິດປະໄວ້ປະມານ 36_48 ຊົ່ວໂມງ (ເອົານ້ຳຫົດມື້ເຊົ້າ ແລະມື້ແລງໃຫ້ຊຸ່ມຕະຫຼອດເວລາ) ເມື່ອເຫັນໜໍ່ເຂົ້າອອກປະມານ 3_5 ມມ ແລ້ວຈິ່ງນຳ ເອົາໄປຫວ່ານໃສ່ໝານກ້າທີ່ກຽມໄວ້ນັ້ນ.

### 1.4.5. ການຫວ່ານກ້າ

ເນື້ອທີ່ຕາກ້າ 1 ແມັດມົນທົນ ຕ້ອງຫວ່ານກ້າທີ່ງອກແລ້ວປະມານ 80 ຫາ 100 ກຼາມຂອງເມັດແຫ້ງ, ໃຫ້ຫວ່ານຢ່າງສະໝໍ່າສະເໝີ. ກ່ອນຫວ່ານກ້ານັ້ນບໍ່ຄວນໃຫ້ໜ້າດິນ ຂອງຕາກ້າແຫຼວເກີນໄປເພາະວ່າເວລາຫວ່ານນັ້ນເມັດເຂົ້າຈະລົບລົງຕົມໂພດແລ້ວກໍຈະພາໃຫ້ການປົ່ງໜໍ່ຂອງກ້າຫຍຸ້ງຍາກ, ກົງກັນຂ້າມຫາກໜ້າດິນຂອງໝານກ້ານັ້ນແຫ້ງເກີນໄປເວລາຫວ່ານກ້າເມັດເຂົ້າຈະບໍ່ຈົມດິນແລ້ວນົກ, ໜູ, ມົດ, ແມງສັດຕູພືດອື່ນໆ ກໍຈະມາເອົາໄປກິນໝົດ.

ດ້ວຍເຫດນີ້ຈິ່ງໃຫ້ຜູ້ຫວ່ານນັ້ນຕ້ອງໄດ້ເອົາໃຈໃສ່ທີ່ສຸດ ເພື່ອຈະໃຫ້ເມັດເຂົ້າຝັງປະມານ 2/3 ຄືໃຫ້ສິ້ນໜຶ່ງຂອງເມັດເຂົ້າພົ້ນດິນຂຶ້ນມາເວົ້າລວມແລ້ວແມ່ນ ໃຫ້ຫວ່ານກ້າເວລາດິນຕາກ້າພໍແຂ້ນເປັນຕົມພໍດີງາມ.



ຮູບ.6. ການຫວ່ານກ້າ

## 1.6. ການບົວລະບັດຮັກສາໜານກ້າ

ຫຼັງຈາກຫວ່ານກ້າ 3_4 ວັນແລ້ວ ໃຫ້ຄ່ອຍເປັ່ງນ້ຳເຂົ້າຕາກ້າ. ການເປັ່ງນ້ຳເຂົ້າໃນໄລຍະທຳອິດບໍ່ໃຫ້ຖ້ວມຕົ້ນກ້າ, ລະດັບນ້ຳຈະຕ້ອງໃຫ້ພໍດີຖ້ວມໜ້າດິນປະມານ 1 ຊຕມ ກໍພໍ, ໃນກໍລະນີນ້ຳຫຼາຍໂພດກໍໃຫ້ເປັ່ງອອກ. ເມື່ອອາຍຸກ້າປະມານ 10 ວັນແລ້ວໃຫ້ເປັ່ງ ນ້ຳເຂົ້າແຊ່ໄວ້ປະຈຳເລີຍ, ໃຫ້ຮັກລະດັບນ້ຳຖ້ວມໜ້າດິນປະມານ 5 ຊຕມ. ໃນກໍລະນີທີ່ ບ່ອນໃດມີລົມພັດແຮງເປັນປະຈຳ ຫຼືໃນໄລຍະອຸ່ນນະພູມຂອງອາກາດມີຄວາມໜາວຈັດນັ້ນໃຫ້ຊອກຫາໃບໄມ້ ຫຼືຜ້າຢາງໄປລ້ອມໜານກ້າໄວ້, ເຮັດແນວນີ້ກໍເພື່ອຮັກສາອຸນຫະພູມຢູ່ໜານກ້າໃຫ້ສະໝ່ຳສະເໝີ, ເພື່ອໃຫ້ກ້າເຕີບໂຕເປັນປົກກະຕິ ແລະບໍ່ຖືກລົບກວນ. ອີກວິທີໜຶ່ງຢູ່ທ້ອງຖິ່ນໃດມີອຸ່ນຫະພູມຕ່ຳຫຼາຍເວລາກາງຄືນແມ່ນໃຫ້ເປັ່ງນ້ຳເຂົ້າຖ້ວມກ້າ, ມື້ເຊົ້າມາເວລາແດດອອກຈຶ່ງຄ່ອຍເປັ່ງນ້ຳອອກໃຫ້ຢູ່ລະດັບເດີມ ຫຼືບໍ່ດັ່ງ ນັ້ນເວລາເຊົ້າໄປປັດນ້ຳໝອກຊຸ້ມອອກຈາກໃບ ແລະຍອດກ້າແລ້ວໃຊ້ຂີ້ເຖົ່າໂຮຍບາງໆຕາມຕາກ້າໃຫ້ທົ່ວ ແລະສະໝ່ຳສະເໝີ.



ຮູບ.7. ການບົວລະບັດຮັກສາກ້າ

## 1.7. ອາຍຸຂອງກ້າ

ຕາມປົກກະຕິແລ້ວ ເພື່ອຮັບປະກັນຜົນເກັບກ່ຽວແມ່ນວ່າອາຍຸກ້າອ່ອນເທົ່າໃດຍິ່ງເປັນການດີ, ໝາຍຄວາມວ່າໃຫ້ຢູ່ໃນລະຫວ່າງ 20_25 ວັນ ແຕ່ວ່າໃນລະດູແລ້ງນີ້ຫຼາຍທ້ອງຖິ່ນອາກາດເລີ່ມເຢັນ ແລະໜາວນັບແຕ່ຕົ້ນເດືອນ 12 ສາກົນເປັນຕົ້ນໄປ.

ສະນັ້ນ, ຍ້ອນອຸ່ນນະພູມຕ່ຳ ແລະຍ້ອນເປັນແນວເຂົ້າພັນປັບປຸງ, ກ້າທີ່ມີອາຍຸຕ່ຳກວ່າ 20 ວັນ ແລ້ວກໍຍັງອ່ອນນ້ອຍ ແລະຕົ້ນສັ້ນ, ບາງບ່ອນກໍບໍ່ສາມາດຈະຫຼົກໄດ້ຊ້ຳ ໃນ ກໍລະນີເປັນເຊັ່ນນັ້ກໍໃຫ້ປະກ້າມີໃບປົ່ງ 4_5 ໃບຈຶ່ງຫຼົກໄປປັກດຳກໍໄດ້.